**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ - ເອກະລາດ - ປະຊາທິປະໄຕ - ເອກະພາບ - ວັດທະນະຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈໍາກັດ**

**DAKLAORUCO** ເລກທີ: 03/ລບ-ບສ

*ປາກເຊ, ວັນທີ 15 ເມສາ 2025*

# ກົດລະບຽບ
## ວ່າດ້ວຍການຫ້າມລ່າສັດແລະຈັບສັດໃນປ່າທໍາມະຊາດ

- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ສະບັບປັບປຸງ ເລກທີ 64/ສພຊ, ປີ 2019 ແຫ່ງປະເທດ ສປປລາວ ແລະ ເອກະສານນິຕິກໍາຕ່າງໆທີ່ກ່ຽວຂ້ອງ;

- ອີງຕາມສົນທິສັນຍາ ແລະ ສັນຍາສາກົນທີ່ກ່ຽວຂ້ອງກັບການປົກປັກຮັກສາຊີວະນາໆພັນ ທີ່ປະເທດ ສປປ ລາວ ໄດ້ລົງນາມເຊັນ ແລະ ເຂົ້າຮ່ວມ;

- ອີງຕາມມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງ FSC-STD-LAO-01-2020;

- ຜ່ານການພິຈາລະນາແລະການສະເຫນີຂອງຄະນະ FSC ບໍລິສັດ .

**ມາດຕາ 1.** ຈຸດປະສົງຂອງລະບຽບການ:

1. ການລ່າຍິງ, ຈັບນົກ ແລະ ສັດປ່າ ໂດຍບໍ່ຄໍານຶງເຖິງສາຍພັນ, ຊະນິດ, ລະດູການລ່າ ແລະ ທຸກວິທີການ ໄດ້ເຮັດໃຫ້ມີການສູນພັນສັດ ຈໍາພວກນົກ ແລະ ສັດປ່ານາໆຊະນິດໃນ ສປປ ລາວ, ເຊິ່ງບາງຊະນິດສັດຫາຍາກໃນປັດຈຸບັນແມ່ນເກືອບຈະສູນພັນໄປໝົດແລ້ວ.

2. ເພື່ອປົກປັກຮັກສາ ແລະ ຂະຫຍາຍພັນສັດທີ່ມີປະໂຫຍດ, ຫາຍາກ ແລະ ມີຄ່າ ພ້ອມກັນນັ້ນ ຍັງເປັນການຂຸດຄົ້ນຊັບພະຍາກອນນົກ ແລະ ສັດປ່າຢ່າງສົມເຫດສົມຜົນ, ຈໍາເປັນຕ້ອງໄດ້ມີການຄຸ້ມຄອງ ມີກົດລະບຽບໃນການລ່າ, ຈັບນົກ ແລະ ສັດປ່າຕາມຂໍ້ກໍານົດ, ເຊິ່ງເບື້ອງຕົ້ນກໍໃຫ້ປະຕິບັດຕາມ ກົດລະບຽບທີ່ບໍລິສັດວາງອອກ ໃຊ້ສໍາລັບໃນເຂດໂຄງການຂອງບໍລິສັດ, ແນໃສ່: ເພື່ອປົກປັກຮັກສາສັດປະເພດນົກ ແລະ ສັດປ່າປະເພດຕ່າງໆທີ່ມີປະໂຫຍດ, ຫາຍາກ ແລະ ມີຄ່າ,ພິເສດແມ່ນໃນລະດູຂະຫຍາຍພັນນົກ, ສັດປ່າອື່ນໆທີ່ບໍ່ເປັນໄພຕໍ່ຊີວິດມະນຸດ;

3. ຫ້າມໃຊ້ອຸປະກອນລ່າສັດຍິງ ແລະ ດັກຈັບທີ່ເປັນອັນຕະລາຍຕໍ່ຄົນ ແລະ ສັດລ້ຽງ, ການຂ້ານົກ ແລະ ສັດປ່າຢ່າງຫຼວງຫຼາຍປ່າເຖື່ອນ;

**ມາດຕາ 2.** ຫ້າມບໍ່ໃຫ້ພະນັກງານຂອງບໍລິສັດປະຕິບັດກິດຈະກໍາດັ່ງລຸ່ມນີ້:

1. ຫ້າມລ່າ, ຍິງ, ຈັບ, ວາງກັບດັກ, ລ້ຽງ, ກັກຂັງ, ຂ້າ, ເກັບໂຮມ, ປຸງແຕ່ງ, ຂົນສົ່ງ ແລະ ຄ້າຂາຍສັດປ່າທີ່ໃກ້ຈະສູນພັນ, ມີຄ່າ, ແລະ ຫາຍາກ ທີ່ໄດ້ຈາກປ່າທໍາມະຊາດ ແລະ ເຂດປ້ອງກັນຂອງປ່າສະຫງວນແຫ່ງຊາດ ດົງຫົວສາວ ຫຼື ຈາກແຫຼ່ງທົວທັດສະເພາະຂອງບໍລິສັດຄື: ແລວທາງປ້ອງກັນສາຍນໍ້າ ແລະ ຊີວະນາໆພັນ; ເຂດພື້ນທີ່ຕົວແບບຂອງລະບົບນິເວດພື້ນເມືອງ;

2. ຫ້າມລ່າສັດ, ຍິງ, ຈັບ, ຟັນ ຄືວຮ່າງກາຍສັດ, ຂ້າ, ບໍລິໂພກ, ຂົນສົ່ງ, ຊື້ຂາຍຊະນິດພັນສັດທີ່ມີໃນບັນຊີລາຍຊື່ຂອງຊະນິດພັນສັດທີ່ໃກ້ຈະສູນພັນ, ມີຄ່າແລະ ຫາຍາກ ສັດເຫຼົ່ານີ້ແມ່ນຕ້ອງປົກປັກຮັກສາເປັນພິເສດ; ຫ້າມໂຄສະນາ, ຈ່າວຊື້ຂາຍ, ບໍລິໂພກຜະລິດຕະພັນທີ່ຜິດຕໍ່ລະບຽບກົດໝາຍທີ່ລະບຸໃນບັນຊີລາຍຊື່ຂອງຊະນິດພັນທີ່ໃກ້ຈະສູນພັນ, ມີຄ່າ ແລະ ຫາຍາກ ທີ່ໃຫ້ປົກປັກຮັກສາພິເສດ;

3. ທຸກໆການເຄື່ອນໄຫວໂຄສະນາ, ວາງສະແດງ, ສົ່ງອອກ, ນຳເຂົ້າ, ນຳເຂົ້າຊົ່ວຄາວ ເພື່ອສົ່ງອອກຄືນໃໝ່, ສົ່ງອອກຊົ່ວຄາວ ເພື່ອນຳເຂົ້າຄືນໃໝ່ ປະເພດສັດປ່າທີ່ໃກ້ຈະສູນພັນ, ມີຄ່າ ແລະ ຫາຍາກ ຕ້ອງຮັບປະກັນແຫຼ່ງກຳເນີດທີ່ຖືກຕ້ອງ ຕາມລະບຽບກົດໝາຍຂອງສາກົນ ແລະ ລະບຽບການທີ່ປະເທດ ສປປ ລາວ ວາງອອກ;

4. ຫ້າມມີກິດຈະກຳໃດໆທີ່ສົ່ງຜົນກະທົບຕໍ່ການດຳລົງຊີບ, ການແຜ່ພັນແລະຈະເລີນຂອງຊະນິດພັນສັດໃນທຳມະຊາດ.

**ມາດຕາ 3.** ພະນັກງານຂອງບໍລິສັດທັງໝົດ ມີໜ້າທີ່ຄຸ້ມຄອງເຂດທີ່ທິວທັດ ທີ່ຢູ່ອາໄສຂອງສິ່ງທີ່ມີຊີວິດ ພືດພັນ ແລະ ສັດປ່າທີ່ຫາຍາກ, ສັດປ່າທີ່ໃກ້ຈະສູນພັນ, ມີຄ່າ ແລະ ຫາຍາກ ທີ່ໄດ້ຄົ້ນຄວ້າເປັນພື້ນຖານໃນການສ້າງເຂດປ່າສະຫງວນດົງຫົວສາວ.

**ມາດຕາ 4.** ຫົວໜ້າຫ້ອງພະແນກການຕ່າງໆ ແລະ ຜູ້ອຳນວຍການນິຄົມ ມີໜ້າທີ່ຊີ້ນຳ ປະຕິບັດ " ກົດລະບຽບ ຫ້າມລ່າສັດ ແລະ ຈັບສັດໃນປ່າທຳມະຊາດ ".

**ມາດຕາ 5.** ຫ້ອງເຕັກນິກ-ຜະລິດ, ຫ້ອງການບໍລິສັດ ແລະ ຄະນະ FSC ມີໜ້າທີ່ກວດກາ ແລະ ຊີ້ນຳການ ປະຕິບັດ " ກົດລະບຽບ ຫ້າມລ່າສັດ ແລະ ຈັບສັດໃນປ່າທຳມະຊາດ ".

**ມາດຕາ 6.** ອຳນວຍການນິຄົມ ມີໜ້າທີ່ປະສານງານກັບບ້ານໃນຂອບເຂດການຄຸ້ມຄອງ, ຜັນຂະຫຍາຍ ເຜີຍແຜ່ ແລະ ລະດົມປະຊາຊົນໃນຊຸມຊົນ ຮ່ວມກັນປະຕິບັດກິດຈະກຳ ຫ້າມລ່າສັດ ແລະ ຈັບສັດໃນປ່າທຳມະຊາດ ບໍລິເວນຂອບເຂດການຄຸ້ມຄອງຂອງບໍລິສັດ.

ຂ້າງເທິງນີ້ແມ່ນກົດລະບຽບ ວ່າດ້ວຍການຫ້າມລ່າສັດ ແລະ ຈັບສັດໃນປ່າທຳມະຊາດ ທີ່ອຳນວຍການບໍລິສັດໄດ້ວາງອອກ. ໃຫ້ບັນດາຫ້ອງພະແນກການຕ່າງໆ, ໜ່ວຍງານທີ່ກ່ຽວຂ້ອງ ແລະ ພະນັກງານກຳມະກອນທຸກຄົນໃນບໍລິສັດຈົ່ງນຳໄປປະຕິບັດຢ່າງເຂັ້ມງວດ.

**ອຳນວຍການບໍລິສັດ**

*ບ່ອນຮັບ:*

- ຄະນະ ອຳນວຍການ ບສ ;
- ພະແນກການຕ່າງໆຂອງບໍລິສັດ ;
- ຫນ່ວຍງານຕ່າງໆທີ່ຂຶ້ນກັບ ບສ ;
- ຈັດເກັບ: ຂາອອກ-ຂາເຂົ້າ, ຄະນະ FSC.

ກະຊວງ ກະສິກຳ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD ແຂວງ ຈຳປາສັກ

**ດັ້ງດິ່ງຟຸ່ງ**